# Course: Human Development Economics

# Week 4

## Human Resources and Economic

Phavone Keodouangkham

Souphanouvong University

# ວິຊາ: ເສດຖະສາດພັດທະນາຊັບພະຍາກອນມະນຸດ

## ອາທິດທີ 4

## ຊັບພະຍາກອນມະນຸດ ແລະ ເສດຖະກິດ

ພາວອນ ແກ້ວດວງຄຳ

ມະຫາວິທະຍາໄລ ສຸພານຸວົງ

# ເນື້ອໃນ

**ຊັບພະຍາກອນມະນຸດ ກັບການປ່ຽນແປງທາງເສດຖະກິດ**

- ປັດໃຈສຳຄັນທີ່ກຳນົດການຈະເລີນເຕີບໂຕທາງເສດຖະກິດໂດຍທົ່ວໄປ
- ການສຶກສາ ກັບ ການຈະເລີນເຕີບໂຕທາງເສດຖະກິດ.
- ການປ່ຽນແປງມູນຄ່າຜະລິດຕະພັນພາຍໃນປະເທດຕໍ່ຫົວຄົນ.
- ການຈະເລີນເຕີບໂຕທາງເສດຖະກິດ, ການອອມ ແລະ ການລົງທຶນ

# ຊັບພະຍາກອນມະນຸດ ກັບການປ່ຽນແປງທາງເສດຖະກິດ

# ບົດບາດຂອງຊັບພະຍາກອນມະນຸດໃນການປ່ຽນແປງທາງເສດຖະກິດ:

ຊັບພະຍາກອນມະນຸດ ມີຄວາມສຳຄັນຢ່າງຍິ່ງໃນການຂັບເຄື່ອນການພັດທະນາເສດຖະກິດ ໂດຍຜ່ານການສຶກສາ, ທັກສະ, ແລະ ຄວາມຮູ້ທີ່ປະຊາຊົນມີ. ການປ່ຽນແປງທາງເສດຖະກິດໃນຍຸກສະໄໝໃໝ່ ຕ້ອງການແຮງງານທີ່ມີທັກສະສູງ ແລະ ສາມາດປັບຕົວໄດ້.

# ຄວາມທ້າທາຍໃນປັດຈຸບັນ:

- **ການປ່ຽນແປງດ້ານເຕັກໂນໂລຍີ, ຢູ່ໃນຍຸກດິຈິຕອລ, ແລະ ການເຊື່ອມໂຍງທາງເສດຖະກິດໂລກ** ຕ້ອງການໃຫ້ປະຊາຊົນມີການສຶກສາ ແລະ ທັກສະທີ່ເໝາະສົມ. ການລົງທຶນໃນການສຶກສາ ແລະ ການຝຶກອົບຮົມ ຈຶ່ງເປັນສິ່ງຈຳເປັນ.

# ການປ່ຽນແປງດ້ານເຕັກໂນໂລຢີ ແລະ ຜົນກະທົບຕໍ່ຊັບພະຍາກອນມະນຸດ

**ຜົນກະທົບຕໍ່ວຽກງານ ແລະ ທັກສະ**

- **ວຽກງານທີ່ເພີ່ມຂຶ້ນ:**
- ວິສະວະກອນເຕັກໂນໂລຢີ
- ຜູ້ຊ່ຽວຊານດ້ານຄວາມປອດໄພຂໍ້ມູນ
- ນັກວິເຄາະ Big Data
- ຜູ້ພັດທະນາ AI/ML
- ຊ່າງຕິດຕັ້ງ ແລະ ບຳລຸງລະບົບອັດຕະໂນມັດ

**ວຽກງານທີ່ປ່ຽນແປງ:**

•ແພດ: ໃຊ້ AI ໃນການວິນິດໄສ

•ຄູສອນ: ໃຊ້ເຕັກໂນໂລຢີການສຶກສາ

•ກະສິກອນ: ໃຊ້ເຕັກໂນໂລຢີການກະເສດທີ່ທັນສະໄໝ

•ຊ່າງກໍ່ສ້າງ: ໃຊ້ເຄື່ອງມືດິຈິຕອນ

# ທັກສະໃໝ່ທີ່ຈຳເປັນ

**ທັກສະເຕັກນິກ:**

- ຄວາມເຂົ້າໃຈພື້ນຖານກ່ຽວກັບ AI
- ການເຮັດວຽກກັບຂໍ້ມູນ
- ການໃຊ້ເຄື່ອງມືດິຈິຕອນໃໝ່
- ຄວາມປອດໄພທາງໄຊເບີ

**ທັກສະມະນຸດ (ທີ່ເຄື່ອງຈັກແທນບໍ່ໄດ້):**

•ຄວາມຄິດສ້າງສັນ
•ການແກ້ໄຂບັນຫາທີ່ຊັບຊ້ອນ
•ການສື່ສານ ແລະ ການເຮັດວຽກຮ່ວມມື
•ຄວາມເອົາໃຈໃສ່ ແລະ ຄວາມຮູ້ສຶກຂອງມະນຸດ
•ການຄິດເຊີງວິພາກວິຈານ

# ຄວາມທ້າທາຍ ແລະ ໂອກາດ

- **ຄວາມທ້າທາຍ:**
- ຄວາມເຣັດໄວຂອງການປ່ຽນແປງ
- ຊ່ອງຫ່າງທາງທັກສະ (Skills Gap)
- ຄວາມບໍ່ສະເໝີພາບໃນການເຂົ້າເຖິງເຕັກໂນໂລຍີ
- ຄວາມກັງວົນຂອງແຮງງານກ່ຽວກັບການແທນທີ່

**ໂອກາດ:**

•ສ້າງອາຊີບໃໝ່ທີ່ບໍ່ເຄີຍມີມາກ່ອນ
•ເພີ່ມປະສິດທິພາບການເຮັດວຽກ
•ເປີດໂອກາດໃຫ້ທຸລະກິດຂະໜາດນ້ອຍ
•ສ້າງນະວັດຕະກຳໃນການແກ້ໄຂບັນຫາສັງຄົມ

# ການປ່ຽນແປງທາງດິຈິຕອລໄດ້ສ້າງຜົນກະທົບອັນໃຫຍ່ຫຼວງຕໍ່ຊັບພະຍາກອນມະນຸດແລະເສດຖະກິດໂລກ:

**ການປ່ຽນແປງໃນຕະຫຼາດແຮງງານ**

**ອາຊີບໃໝ່ທີ່ເກີດຂຶ້ນ:**

- ນັກພັດທະນາໂປຼແກຼມ ແລະ ແອັບພິເຄຊັນ
- ນັກວິເຄາະຂໍ້ມູນ (Data Analyst)
- ຜູ້ຊ່ຽວຊານດ້ານຄວາມປອດໄພທາງໄຊເບີ
- ນັກການຕະຫຼາດດິຈິຕອລ
- ຜູ້ອອກແບບ UX/UI

**ອາຊີບທີ່ຖືກແທນທີ່:**

- ພະນັກງານທະນາຄານບາງຕຳແໜ່ງ
- ແຮງງານໃນໂຮງງານອຸດສາຫະກຳ
- ພະນັກງານຂາຍຢູ່ຮ້ານຄ້າປະເພນີ

# ການເຊື່ອມໂຍງທາງເສດຖະກິດໂລກ ແລະ ຜົນກະທົບຕໍ່ຊັບພະຍາກອນມະນຸດ

## ຄວາມໝາຍຂອງການເຊື່ອມໂຍງທາງເສດຖະກິດໂລກ

**Globalization:**

ການເຊື່ອມຕໍ່ເສດຖະກິດຂອງປະເທດຕ່າງໆ

ການເຄື່ອນຍ້າຍຂອງສິນຄ້າ, ການບໍລິການ, ທຶນ ແລະ ແຮງງານ

ການແລກປ່ຽນວັດທະນະທຳ ແລະ ເຕັກໂນໂລຍີ

ການສ້າງຕະຫຼາດໂລກເປັນນຶ່ງດຽວ

1

# ຈົ່ງອະທິບາຍປັດໃຈສຳຄັນທີ່ກຳນົດການຈະເລີນເຕີບໂຕທາງເສດຖະກິດໂດຍທົ່ວໄປ

1

# ປັດໃຈສຳຄັນທີ່ກຳນົດການຈະເລີນເຕີບໂຕທາງເສດຖະກິດໂດຍທົ່ວໄປ

ການສຶກສາຂອງ ທີ. ດັບເບີນຢູ, ຊູດ ເຊິ່ງໄດ້ສຶກສາການຈະເລີນເຕີບໂຕທາງເສດຖະກິດຂອງຫລາຍປະເທດຕັ້ງແຕ່ປີ ຄສ. 1960 ໄດ້ຂໍ້ສະຫຼຸບທີ່ສຳຄັນວ່າ ການລົງທຶນໃນການສຶກສາເປັນປັດໃຈທີ່ສຳຄັນຫຼາຍໃນການອະທິບາຍການຈະເລີນເຕີບໂຕທາງເສດຖະກິດ ແລະ ພົບວ່າ ປະມານ 20-40% ຂອງຜົນຜະລິດລວມທີ່ເພີ່ມຂຶ້ນເປັນຜົນຈາກການລົງທຶນທາງການສຶກສາ ການລົງທຶນໃນການສຶກສາເຮັດໃຫ້ແຮງງານມີປະສິດທິພາບໃນການຜະລິດເພີ່ມຫຼາຍຂຶ້ນເຮັດໃຫ້ຜົນຜະລິດເພີ່ມຫຼາຍຂຶ້ນເຮັດໃຫ້ຜົນຜະລິດລວມເພີ່ມຂຶ້ນຢ່າງສຳຄັນ.

1

# ປັດໃຈສຳຄັນທີ່ກຳນົດການຈະເລີນເຕີບໂຕທາງເສດຖະກິດໂດຍທົ່ວໄປ

ໂຈເຊັບ ຊຸມປີເຕີ ໃນໜັງສືຂອງເພິ່ນ Theory of Economic Development, ເຊິ່ງໄດ້ພິມຄັ້ງທຳອິດໃນປີ ຄສ. 1911 ໄດ້ຊີ້ໃຫ້ເຫັນບົດບາດທີ່ສຳຄັນຢ່າງຍິ່ງຂອງຜູ້ປະກອບການ ເຊິ່ງເພິ່ນໄດ້ເນັ້ນວ່າ ຄວາມກ້າວໜ້າຂອງເທັກໂນໂລຊີ ແລະ ອັດຕາການຄົ້ນພົບຊັບພະຍາກອນ ຂຶ້ນຢູ່ກັບອຸປະທານຂອງຜູ້ປະກອບການ ແລະ ຜູ້ປະກອບການນີ້ເອງເປັນຜູ້ສະແຫວງຫາໂອກາດທີ່ຈະນຳເທັກໂນໂລຊີໃໝ່ໆ ຫຼື ສິ່ງປະດິດໃຫມ່ໆ ຫຼື ຊັບພະຍາກອນທີ່ຄົ້ນພົບໃໝ່ ເຂົ້າສູ່ຂະບວນການຜະລິດ ແລະ ຕະຫຼາດ.

1

# ປັດໃຈສຳຄັນທີ່ກຳນົດການຈະເລີນເຕີບໂຕທາງເສດຖະກິດໂດຍທົ່ວໄປ

ຊຸມປີເຕີ ໄດ້ໃຫ້ຄວາມໝາຍຄຳວ່າ ອິນໂນເວເຊິນ (Innovations) ຫຼື ສິ່ງຄົ້ນພົບໃໝ່ໆໄວ້ດັ່ງນີ້:

1) ການນຳເອົາສິ່ງໃໝ່ໆເຂົ້າສູ່ຕະຫຼາດ,
2) ການນຳເອົາເທັກນິກໃໝ່ໆເຂົ້າສູ່ຂະບວນການຜະລິດ,
3) ການເປີດຕະຫຼາດໃໝ່ໆສຳລັບສິນຄ້າ,
4) ການເຂົ້າຄວບຄຸມແຫຼ່ງວັດຖຸດິບໃໝ່ໆ ຂອງອຸດສາຫະກຳໃດໆ ເຊັ່ນ: ການສ້າງອຳນາດຂຶ້ນມາໃໝ່ ຫຼື ການທຳລາຍອຳນາດຜູກຂາດເດີມທີ່ມີຢູ່ ເປັນຕົ້ນ.

1

# ປັດໃຈສຳຄັນທີ່ກຳນົດການຈະເລີນເຕີບໂຕທາງເສດຖະກິດໂດຍທົ່ວໄປ

ສິ່ງໃໝ່ໆ ທັງຫຼາຍເຫຼົ່ານີ້ຈະບໍ່ມີປະໂຫຍດອັນໃດ **ຖ້າຫາກບໍ່ມີຜູ້ປະກອບການ** ສະນັ້ນ ຊູມປີເຕີຈຶ່ງໃຫ້ຄວາມສຳຄັນແກ່ຜູ້ປະກອບການພຽງຢ່າງດຽວທີ່ເປັນປັດໃຈກຳນົດການຈະເລີນເຕີບໂຕທາງເສດຖະກິດ.

1

# ປັດໄຈສຳຄັນທີ່ກຳນົດການຈະເລີນເຕີບໂຕທາງເສດຖະກິດໂດຍທົ່ວໄປ

- **ອາເອັບ ແຮລອດ (R.F Harrod) ໄດ້**ສະຫຼຸບ ຄ້າວໆກັນໃນການອະທິບາຍເຖິງການຈະເລີນເຕີບໂຕທາງເສດຖະກິດວ່າ ມີປັດໄຈ 3 ປະການທີ່ສຳຄັນທີ່ເປັນກົນຈັກຂອງການຈະເລີນເຕີບໂຕທາງເສດຖະກິດຄື:

(1) ກຳລັງຄົນ,

(2) ຜົນຜະລິດສະເລ່ຍຕໍ່ຫົວຄົນ,

(3) ປະລິມານທຶນທີ່ຢູ່ໃນລະບົບເສດຖະກິດ ແລະ ຕົວກຳນົດຜົນຜະລິດໂດຍສະເລ່ຍໃນຂໍ້ (2).ສາມາດແຕກອອກເປັນ: (1) ລະດັບຂອງເທັກນິກໃນການຜະລິດ, (2) ປະລິມານຂອງຊັບພະຍາກອນທີ່ຮູ້ວ່າມີແລ້ວ ແຕ່ແຮລອດ ໄດ້ຊີ້ວ່າ ການປະດິດສິ່ງໃຫມ່ໆ ເປັນປັດໄຈທີ່ສຳຄັນພຽງຢ່າງດຽວຕໍ່ການປ່ຽນແປງຂອງຜົນຜະລິດຕໍ່ຫົວຄົນ.

1

# ປັດໃຈສຳຄັນທີ່ກຳນົດການຈະເລີນເຕີບໂຕ ທາງເສດຖະກິດໂດຍທົ່ວໄປ

ຈາກການທົບທວນພໍສັງເຂບ ເຖິງປັດໃຈສຳຄັນທີ່ກຳນົດການຈະເລີນເຕີບໂຕທາງເສດຖະກິດ ຊີ້ວັດວ່າ ສູນກາງທີ່ເປັນປັດໃຈຄືນ **ອາດຳສະມິດ** ເນັ້ນປັດໃຈ ແຮງງານ ແລະ ການແບ່ງງານກັນເຮັດ, **ຄາກມາກ** ເນັ້ນປັດໃຈ ແຮງງານກຳມະກອນ, **ຊຸມປີເຕີ** ເນັ້ນຜູ້ປະກອບການ ແລະ ການຄົ້ນພົບສິ່ງໃໝ່ໆ, **ແຮລອດ** ເນັ້ນກຳລັງຄືນ, ຜົນຜະລິດຕໍ່ຫົວຄົນ, ປະລິມານສິນຄ້າທຶນ, ລະດັບເທັກນິກການຜະລິດ, ປະລິມານຊັບພະຍາກອນ ແລະ ສິ່ງປະດິດຄິດຄົ້ນໃໝ່ໆ , **ຊູດ** ເນັ້ນທຶນມະນຸດ ທີ່ໄດ້ຈາກການສຶກສາ ແລະ ຝຶກອົບຮົມ ເຊິ່ງລ້ວນແຕ່ມີສູນກາງຢູ່ທີ່ປັດໃຈຄົນ ແລະ ຄຸນນະພາບຂອງຄົນ , ສ່ວນປັດໃຈອື່ນໆ ເປັນປັດໃຈປະກອບທັງໝົດ.

1

# ປັດໄຈສຳຄັນທີ່ກຳນົດການຈະເລີນເຕີບໂຕທາງເສດຖະກິດໂດຍທົ່ວໄປ

**ສະຫຼຸບ** ຂໍຍົກເອົາຕົວທີ່ເປັນປັດໄຈທີ່ເຮັດໃຫ້ເສດຖະກິດຈະເລີນເຕີບໂຕ ຂອງ ເຮີດແມນ (Hirschman) ດັ່ງນີ້ຜູ້ປະກອບການ, ນັກລົງທຶນ, ຜູ້ສ້າງໂອກາດໃນການລົງທຶນ, ຜູ້ຄົ້ນພົບຊັບພະຍາກອນ ຫຼື ສິນຄ້າໃໝ່ໆ, ຜູ້ປະດິດ ຫຼື ຄົ້ນພົບເທັກໂນໂລຍີໃໝ່ໆ, ຄູຜູ້ສອນໃຫ້ເກີດຄວາມຊ່ຽວຊານ ຫຼື ທັກສະໃໝ່ໆ, ຜູ້ຖ່າຍທອດຄວາມຄິດ ຫຼື ຄວາມຮູ້ໃໝ່ໆ ແລະ ນັກອອມ ຫຼື ນັກປະຫຍັດ ຖ້າຫາກຂາດຕົວການທີ່ກ່າວແລ້ວຂ້າງຕົ້ນກໍ່ຢ່າຫວັງວ່າເສດຖະກິດຂອງປະເທດຈະຈະເລີນກ້າວໜ້າ ສະນັ້ນ ຕົວການທີ່ເຮັດໃຫ້ເສດຖະກິດຈະເລີນເຕີບໂຕດັ່ງກ່າວ ຂ້າງຕົ້ນລ້ວນມີ **ສູນກາງທີ່ຊັບພະຍາກອນມະນຸດທັງໝົດ.**

2

**ຈົ່ງອະທິບາຍຄວາມສຳຄັນຂອງການສຶກສາ ກັບ ການຈະເລີນເຕີບໂຕທາງເສດຖະກິດ.**

2

# ການສຶກສາ ກັບ ການຈະເລີນເຕີບໂຕທາງເສດຖະກິດ.

ການຈະເລີນເຕີບໂຕທາງເສດຖະກິດ ມີສູນກາງຢູ່ທີ່ຊັບພະຍາກອນມະນຸດ , ມະນຸດໃນລະບົບເສດຖະກິດຈະຕ້ອງເປັນຜູ້ທີ່ໄດ້ຮັບການສຶກສາ, ການຝຶກອົບຮົມ ແລະ ມີຄຸນນະພາບການສຶກສາ ມີຜົນກະທົບຕໍ່ປະສິດທິພາບໃນການຜະລິດ, ການຈະເລີນເຕີບໂຕທາງເສດຖະກິດ ໄດ້ຫຼາຍທາງ ກ່າວຄື ຜູ້ທີ່ໄດ້ຮັບການສຶກສາດີ ຍ່ອມສາມາດຮັບຂ່າວສານໃໝ່ໆ ໄດ້ໄວກວ່າ ແລະ ສາມາດຈະນຳປັດໄຈການຜະລິດໃໝ່ໆທີ່ບໍ່ຄຸ້ນເຄີຍ ແລະ ຂະບວນການຜະລິດໃໝ່ໆ ໄປໃຊ້ຢ່າງມີປະສິດທິພາບຫຼາຍກວ່າ

2

## ການສຶກສາ ກັບ ການຈະເລີນເຕີບໂຕທາງເສດຖະກິດ.

ສິນຄ້າໃໝ່ໆ ຫຼື ຂະບວນການຜະລິດໃໝ່ໆ ທີ່ຜະລິດຂຶ້ນ ຫຼື ນຳເຂົ້າມາໃຊ້ ມີຄວາມຈຳເປັນທີ່ມະນຸດຈະຕ້ອງຮຽນຮູ້ວ່າມັນເຮັດວຽກແນວໃດ ເຊັ່ນ: ຄອມພິວເຕີ ຜູ້ມີການສຶກສາມາດຮຽນຮູ້ ແລະ ເຂົ້າໃຈ ແລະ ພັດທະນາ ຂະບວນການໄດ້ໄວກວ່າ ໂດຍສະເພາະໃນໂລກໂລກາພິວັດ ທີ່ຂ່າວສານ ແລະ  ສິ່ງແວດລ້ອມ ແລະ ເທັກໂນໂລຊີປ່ຽນແປງໄປຢ່າງວ່ອງໄວ, ຊັບພະຍາກອນບຸກຄົນ ຫຼື ແຮງງານທີ່ມີການສຶກສາສູງຍ່ອມໄດ້ປຽບຢ່າງຍິ່ງ

2

# ການສຶກສາ ກັບ ການຈະເລີນເຕີບໂຕທາງເສດຖະກິດ.

**ການສຶກສາຈຶ່ງມີບົດບາດສຳຄັນຄື:**

1. ຜົນກະທົບຂອງການສຶກສາຕໍ່ລະດັບ ຄ່າຈ້າງ ແລະ ຜົນຜະລິດ
2. ການທີ່ອຸດສາຫະກຳຈະເລີນຢ່າງ ວ່ອງໄວ

2

# ການສຶກສາ ກັບ ການຈະເລີນເຕີບໂຕທາງເສດຖະກິດ.

ການສຶກສາສົ່ງຜົນກະທົບຕໍ່ການເຕີບໂຕເສດຖະກິດໃນຫຼາຍດ້ານ:ການພັດທະນາທຶນມະນຸດການສຶກສາສ້າງກຳລັງແຮງງານທີ່ມີທັກສະແລະມີຄວາມຮູ້ສູງ, ປັບປຸງປະສິດທິພາບການເຮັດວຽກ. ບຸກຄົນທີ່ມີການສຶກສາສາມາດປັບຕົວເຂົ້າກັບເຕັກໂນໂລຢີໃຫມ່ໄດ້ດີກວ່າ ແລະ ແກ້ໄຂບັນຫາທີ່ສັບສົນ.

# ການສົ່ງເສີມນະວັດຕະກໍາ

ລະບົບການສຶກສາທີ່ເຂັ້ມແຂງສ້າງກໍາລັງແຮງງານການຄົ້ນຄວ້າ ແລະ ການພັດທະນາ, ນໍາໄປສູ່ການປະດິດສ້າງຂອງເຕັກໂນໂລຊີໃຫມ່ ແລະ ການປັບປຸງຂະບວນການຜະລິດ. ນະວັດຕະກໍາເຫຼົ່ານີ້ເພີ່ມຜົນຜະລິດ ແລະ ຄວາມສາມາດໃນການແຂ່ງຂັນ.

## ການເພີ່ມລາຍຮັບຂອງປະຊາຊົນ

ຄົນທີ່ມີການສຶກສາສູງມີແນວໂນ້ມທີ່ຈະມີລາຍໄດ້ເພີ່ມຂຶ້ນ, ເຊິ່ງເພີ່ມກຳລັງການຊື້. ການໃຊ້ຈ່າຍທີ່ເພີ່ມຂຶ້ນຊຸກຍູ້ຄວາມຕ້ອງການສິນຄ້າແລະການບໍລິການ, ເຮັດໃຫ້ເສດຖະກິດເຕີບໂຕ.

# ການຫຼຸດຜ່ອນຄວາມທຸກຍາກ

ການສຶກສາແມ່ນເຄື່ອງມືຫຼັກໃນການປັບປຸງຊີວິດການເປັນຢູ່. ໃນເວລາທີ່ປະຊາຊົນມີໂອກາດທີ່ຈະຮຽນຮູ້ທັກສະໃຫມ່, ພວກເຂົາສາມາດຊອກຫາວຽກທີ່ດີກວ່າຫຼືເລີ່ມຕົ້ນທຸລະກິດຂອງຕົນເອງ.

## ດຶງດູດການລົງທຶນປະເທດທີ່ມີກຳລັງແຮງງານ

ການສຶກສາດີດຶງດູດນັກລົງທຶນຕ່າງປະເທດຍ້ອນວ່າພວກເຂົາໝັ້ນ ໃຈໃນຄຸນນະພາບຂອງແຮງງານຂອງພວກເຂົາ. ການລົງທຶນນີ້ສ້າງ ວຽກເຮັດງານທຳ, ເຕັກໂນໂລຊີ, ແລະຄວາມຮູ້ໃໝ່.ການລົງທຶນ ດ້ານການສຶກສາແມ່ນການລົງທຶນໃນໄລຍະຍາວທີ່ສົ່ງຜົນໃຫ້ ເສດຖະກິດເຕີບໂຕແບບຍືນຍົງ.

3

ຈົ່ງອະທິບາຍຊັບພະຍາກອນມະນຸດ ກັບ
ການປ່ຽນແປງມູນຄ່າຜະລິດຕະພັນພາຍໃນ
ປະເທດຕໍ່ຫົວຄົນ.

3

# ການປ່ຽນແປງມູນຄ່າຜະລິດຕະພັນພາຍໃນປະເທດຕໍ່ຫົວຄົນ.

**ຈາກການສຶກສາເສດຖະກິດຂອງ 8 ປະເທດ ໃນອາຊີທີ່ມີອັດຕາການຈະເລີນເຕີບໂຕທາງເສດຖະກິດສູງກວ່າປະເທດອື່ນ ທະນາຄານໂລກໄດ້ສະຫຼຸບປັດໃຈທີ່ສຳຄັນຕ່າງໆ ທີ່ແຕ່ລະປະເທດມີຄືກັນ ດັ່ງນີ້:**

1. ການຈະເລີນເຕີບໂຕຂອງຜົນຜະລິດ ແລະ ປະສິດທິພາບໃນການຜະລິດຢ່າງວ່ອງໄວໃນພາກກະສິກຳ.
2. ອັດຕາການສົ່ງອອກສູງກວ່າປະເທດອື່ນໆ ໃນສິນຄ້າຫັດຖະກຳ-ອຸດສາຫະກຳ.
3. ພາວະການຈະເລີນພັນຫຼຸດລົງກ່ອນ ແລະ ໄວກວ່າປະເທດອື່ນໆ.

3

# ການປ່ຽນແປງມູນຄ່າຜະລິດຕະພັນພາຍໃນປະເທດຕໍ່ຫົວຄົນ.

4. ອັດຕາການຈະເລີນເຕີບໂຕຂອງສິນຄ້າທຶນສູງກວ່າ ແລະ ເກື້ອໜູນດ້ວຍອັດຕາການອອມພາຍໃນປະເທດທີ່ສູງກວ່າປະເທດອື່ນໆ.

5. ມີທຶນມະນຸດເລີ່ມຕົ້ນໃນລະດັບສູງກວ່າ ແລະ ມີອັດຕາການຂະຫຍາຍຕົວຂອງທຶນມະນຸດທີ່ສູງກວ່າປະເທດອື່ນໆ.

6.ມີອັດຕາການເພີ່ມປະສິດທິພາບໃນການຜະລິດທີ່ສູງກວ່າໂດຍທົ່ວໄປ.

4

## ການຈະເລີນເຕີບໂຕທາງເສດຖະກິດ, ການອອມ ແລະ ການລົງທຶນ

ການສຶກສາ, ການຝຶກອົບຮົມ ແລະ ຄຸນນະພາບຊັບພະຍາກອນມະນຸດ ເປັນປັດໄຈທີ່ສຳຄັນຢ່າງຍິ່ງຕໍ່ການຈະເລີນເຕີບໂຕທາງເສດຖະກິດ, ເມື່ອເສດຖະກິດຈະເລີນເຕີບໂຕ ຄອບຄົວມີລາຍໄດ້ເພີ່ມຂຶ້ນ, ລາຍໄດ້ຕໍ່ຫົວຄົນເພີ່ມຂຶ້ນ ລາຍຈ່າຍໃນການບໍລິໂພກຈະເພີ່ມຂຶ້ນ ລາຍໄດ້ທີ່ເຫຼືອຈະເປັນເງິນອອມ ແລະ ເງິນລົງທຶນຕໍ່ໄປ.

4

# ການຈະເລີນເຕີບໂຕທາງເສດຖະກິດ, ການອອມ ແລະ ການລົງທຶນ




ຂໍ້ມູນຈາກ (XIONGTOUA et al., 2018)

# ຄຳຖາມທ້າຍບົດ

- ປັດໃຈສຳຄັນທີ່ກຳນົດການຈະເລີນເຕີບໂຕທາງເສດຖະກິດປະກອບມີປັດໃຈໃດແດ່?
- ຈົ່ງອະທິບາຍ ການສຶກສາສິ່ງຜົນຈະເລີນເຕີບໂຕທາງເສດຖະກິດຄືແນວໃດ?
- ການພັດທະນາສິ່ງຜົນຕໍ່ການຈະເລີນເຕີບໂຕທາງເສດຖະກິດ, ການອອມ ແລະ ການລົງທຶນ

# ເອກະສານອ້າງອີງ/REFERENCE

Human Development Economics. XIONGTOUA,T. SEANGDALA,CH. BOUNTHUNSSENGNGAM,S. KEODOUANGKHAM,P. (2018). Souphanouvong University.

ຂອບໃຈທີ່ຮັບຟັງ

# THANK YOU

Email Phavone@su.edu.la

Phone +856 20 28 616 221